ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1737/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 09 JUN 2023

# ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສໍາລັບ ວຽກປ່ຽນຖ່າຍອຸປະກອນທີ່ກ່ຽວຂ້ອງກັບເຄື່ອງຈັກ-ເຄື່ອງລາງ ແລະ ປ່ຽນຖ່າຍລະບົບປ້ອງກັນ (Protection Relay) ເຂື່ອນໄຟຟ້າເຊເສັດ 3 ແລະ ເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່.

ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2022 ລົງວັນທີ 30/05/2022.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຟລ, ຝ່າຍບໍລິຫານງານສະໜັບສະໜູນອົງກອນ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 13/06/2023 ຈົນເຖິງວັນທີ 05/07/2023, ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສໍານັກງານຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ.ລາວ, ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 13/06/2023 ເຖິງວັນທີ 05/07/2023, ໃນລາຄາ 250.000 (ສອງແສນຫ້າສິບພັນ) ກີບ/ຊຸດ, ວິທີການຊໍາລະຕ້ອງເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14:00 ໂມງ, ວັນທີ 26/07/2023. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກໍານົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 26/07/2023. ໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

**ຜູ້ອໍານວຍການໃຫຍ່**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ວັນແສງ ວັນນະວົງ

ຮັກສາການ ຜູ້ອໍານວຍການໃຫຍ່

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງວຽງຈັນ.

ໂທລະສັບ: (856-21) 316142, ແຟັກ: (856-21) 316141, ອີເມລ໌: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la